ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ກົມທະບຽນວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 90 /ຈທວ

ນະຄອນຫຼວງວຽງຈັນ, ວັນທີ 28 ກຸມພາ 2025

# ແຈ້ງການ (ຄັ້ງທີ 02)

**ເຖິງ :** ຜູ້ອໍານວຍການ ບໍລິສັດມະຫາຊົນ ຈໍານວນ 10 ຫົວໜ່ວຍ.

**ເລື່ອງ:** ແຈ້ງບໍລິສັດມະຫາຊົນ ຈໍານວນ 10 ຫົວໜ່ວຍ ທີ່ບໍ່ໄດ້ເຂົ້າໄປແຈ້ງເຈດຈໍານົງໃນການລະດົມທຶນ ໃຫ້ເຂົ້າມາປ່ຽນຮູບແບບບໍລິສັດ ຫຼື ຍຸບເລີກວິສາຫະກິດ ນໍາເຈົ້າໜ້າທີ່ທະບຽນວິສາຫະກິດ ຫຼື ສືບຕໍ່ເຂົ້າໄປແຈ້ງເຈດຈໍານົງໃນການລະດົມທຶນກັບສໍານັກງານ ຄຄຊ.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ແຈ້ງການຂອງເຈົ້າໜ້າທີ່ທະບຽນວິສາຫະກິດ, ເລື່ອງ: ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດເປັນຮູບແບບບໍລິສັດມະຫາຊົນ ກ່ອນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງປີ 2022 ສະບັບເລກທີ 311/ຈທວ, ລົງວັນທີ 25 ມິຖຸນາ 2024;
- ອີງຕາມ ໜັງສືລາຍງານຂອງ ສໍານັກງານ ຄຄຊ, ເລື່ອງ: ການລາຍງານຕິດຕາມ ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດເປັນຮູບແບບບໍລິສັດມະຫາຊົນ ສະບັບເລກທີ 206/ສຄຄຊ, ລົງວັນທີ 07 ພະຈິກ 2024.

ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທະບຽນວິສາຫະກິດ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຜ່ານການຈັດຕັ້ງປະຕິບັດຕາມແຈ້ງການຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ສະບັບເລກທີ 311/ຈທວ, ລົງວັນທີ 25 ມິຖຸນາ 2024 ເຫັນວ່າ ບໍລິສັດມະຫາຊົນ ຈໍານວນໜຶ່ງໄດ້ເຂົ້າມາປ່ຽນຮູບແບບບໍລິສັດເປັນຮູບແບບອື່ນ ນໍາເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງແລ້ວ ແລະ ຍັງມີບໍລິສັດມະຫາຊົນ ຈໍານວນ 10 ຫົວໜ່ວຍ ທີ່ບໍ່ໄດ້ເຂົ້າໄປແຈ້ງເຈດຈໍານົງໃນການລະດົມທຶນກັບສໍານັກງານ ຄຄຊ ຊຶ່ງມີລາຍຊື່ດັ່ງລຸ່ມນີ້:

1. ບໍລິສັດ ລາວ-ອິນໂດໄຊນາ ກຣຸບ ມະຫາຊົນ, ໃບທະບຽນວິສາຫະກິດ ສະບັບເລກທີ 0644/ຈທວ, ລົງວັນທີ 24/03/2022, ເລກປະຈໍາຕົວຜູ້ເສຍອາກອນ: 921836489900
2. ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ, ໃບທະບຽນວິສາຫະກິດ ສະບັບເລກທີ 0546/ຈທວ, ລົງວັນທີ 01/04/2020, ເລກປະຈໍາຕົວຜູ້ເສຍອາກອນ: 786351522900
3. ບໍລິສັດ ລາວເຊັນໂທຣ ແອລາຍ ມະຫາຊົນ, ໃບທະບຽນວິສາຫະກິດ ສະບັບເລກທີ 0840/ຈທວ, ລົງວັນທີ 20/04/2012, ເລກປະຈໍາຕົວຜູ້ເສຍອາກອນ: 459484287002
4. ບໍລິສັດ ຊິ້ນງົວວຽງຈັນ ມະຫາຊົນ, ໃບທະບຽນວິສາຫະກິດ ສະບັບເລກທີ 702/ຈທວ, ລົງວັນທີ 19/08/2016, ເລກປະຈໍາຕົວຜູ້ເສຍອາກອນ: -
5. ບໍລິສັດ ນໍ້າມັນເຊື້ອໄຟອິມແພຣຽວ ລາວ ມະຫາຊົນ, ໃບທະບຽນວິສາຫະກິດ ສະບັບເລກທີ 2983/ຈທວ, ລົງວັນທີ 28/12/2022, ເລກປະຈໍາຕົວຜູ້ເສຍອາກອນ: 758693927900

6. ບໍລິສັດ ລ້ານຊ້າງ ປະກັນໄພ ມະຫາຊົນ, ໃບທະບຽນວິສາຫະກິດ ສະບັບເລກທີ 0017/ຈທວ, ລົງວັນທີ 09/01/2018, ເລກປະຈຳຕົວຜູ້ເສຍອາກອນ: 329520847900

7. ບໍລິສັດ ທີ່ປຶກສາດ້ານການເງິນ ເອເອັມເອ ມະຫາຊົນ, ໃບທະບຽນວິສາຫະກິດ ສະບັບເລກທີ 1536/ຈທວ, ລົງວັນທີ 17/09/2021, ເລກປະຈຳຕົວຜູ້ເສຍອາກອນ: 116807056900

8. ບໍລິສັດ ຄັນອານທອງດ-ລາວຮຸ້ນສ່ວນມະຫາຊົນ, ໃບທະບຽນວິສາຫະກິດ ສະບັບເລກທີ 0095/ຈທວ, ລົງວັນທີ 21/12/2011, ເລກປະຈຳຕົວຜູ້ເສຍອາກອນ: -

9. ບໍລິສັດ ຮ່ວມພັດທະນາກະສິກຳ ຂາອອກ-ຂາເຂົ້າ ມະຫາຊົນ, ໃບທະບຽນວິສາຫະກິດ ສະບັບເລກທີ 2173/ຈທວ, ລົງວັນທີ 21/11/2019, ເລກປະຈຳຕົວຜູ້ເສຍອາກອນ: 182398388900

10. ບໍລິສັດ ມະຫາຊົນຂົນສົ່ງທາງບົກ ຊຽງຂວາງ, ໃບທະບຽນວິສາຫະກິດ ສະບັບເລກທີ 0610/ຈທວ, ລົງວັນທີ 27/04/2010, ເລກປະຈຳຕົວຜູ້ເສຍອາກອນ: -

ສະນັ້ນ, ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທະບຽນວິສາຫະກິດ ຈຶ່ງອອກແຈ້ງການເປັນຄັ້ງທີ 02 ໂດຍໃຫ້ ບໍລິສັດມະຫາຊົນ ຈຳນວນ 10 ຫົວໜ່ວຍຂ້າງເທິງ ຈັດຕັ້ງປະຕິບັດ ດັ່ງນີ້:

1. ກໍລະນີ ບໍ່ມີຈຸດປະສົງລະດົມທຶນຜ່ານຕະຫຼາດທຶນ ແມ່ນໃຫ້ເຂົ້າມາພົວພັນກັບເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນທີ່ອອກໃບທະບຽນວິສາຫະກິດ ເພື່ອດຳເນີນການ ປ່ຽນແປງຮູບແບບບໍລິສັດມະຫາຊົນ ເປັນຮູບແບບອື່ນ ຫຼື ຍຸບເລີກວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ.

2. ກໍລະນີ ຍັງມີຈຸດປະສົງລະດົມທຶນຜ່ານຕະຫຼາດທຶນ ແມ່ນໃຫ້ເຂົ້າໄປພົວພັນກັບ **ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຕັ້ງຢູ່ ບ້ານໂພນສະອາດ, ໜ່ວຍ 20 ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ** ເພື່ອແຈ້ງເຈດຈຳນົງໃນການລະດົມທຶນ ແລະ ປະຕິບັດຕາມຂັ້ນຕອນລະດົມທຶນຜ່ານຕະຫຼາດທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຫຼັກຊັບ.

3. ການດຳເນີນຕາມຂໍ້ 1 ແລະ ຂໍ້ 2 ເທິງນີ້ ແມ່ນໃຫ້ຈັດຕັ້ງປະຕິບັດ**ພາຍໃນເວລາ 30 ວັນ** ນັບແຕ່ວັນແຈ້ງການສະບັບນີ້ ໄດ້ປະກາດລົງໃນເວັບໄຊຖານຂໍ້ມູນວິສາຫະກິດແຫ່ງຊາດ (www.ned.moic.gov.la) ເປັນຕົ້ນໄປ. ພາຍຫຼັງສິ້ນສຸດກຳນົດເວລາດັ່ງກ່າວແລ້ວ, ຖ້າຫາກ ບໍລິສັດມະຫາຊົນ ບໍ່ເຂົ້າມາດຳເນີນການໃດໜຶ່ງ ແມ່ນຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດເຂັ້ມງວດດ້ວຍ.

**ເຈົ້າໜ້າທີ່ທະບຽນວິສາຫະກິດ**

ກະຊວງອຸດສາຫະກຳ ແລະ ການຄ້າ — ເຈົ້າໜ້າທີ່ ທະບຽນວິສາຫະກິດ — ກົມທະບຽນວິສາຫະກິດ

ອະພິສິດ ແສງສຸລິວົງ

**ບ່ອນນຳສົ່ງ:**

- ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອຊາບ ແລະ ຕິດຕາມ
- ໝາຍເລກໂທລະສັບ: (021) 217770, 020 99894111, 020 92624745